ສຳນັກງານ ຄຄຊ
ເລກທີ 0580
ວັນທີ 20 JUN 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 24 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ມິຖຸນາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 27-31/05/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,39% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາດີ ເຫັນໄດ້ຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ ຢູ່ທີ່ລະດັບ 134,10 ຈຸດໃນເດືອນ 05/2019 ເພີ່ມຂຶ້ນຈາກລະດັບ 129,20% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງມີຈຳນວນ 1,66 ລ້ານຄົນ ໃນອາທິດທີ 18/05/2019 ຫຼຸດລົງຈາກຈຳນວນ 1,68 ລ້ານຄົນໃນອາທິດທີຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>20-24/05/2019 | ອາທິດນີ້<br>27-31/05/2019 | ເປີເຊັນ<br>ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1197 | 1,1153 | 0,39% |
| ເຢນ/ໂດລາ | 109,68 | 108,76 | 0,85% |
| ບາດ/ໂດລາ | 31,870 | 31,620 | 0,79% |
| ເປໂຊ/ໂດລາ | 52,22 | 52,20 | 0,04% |
| ຣູເປັຍ/ໂດລາ | 14.400,00 | 14.280,00 | 0,84% |
| ໂດລາສິງກະໂປ/ໂດລາ | 1,3766 | 1,3779 | -0,09% |
| ຢວນ/ໂດລາ | 6,9013 | 6,9039 | -0,04% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 5,36% ຈາກ 58,42 ໂດລາ/ບາເຣວ ເປັນ 55,29 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນຫຼາຍກວ່າຄວາມຕ້ອງການໃຊ້ນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສ. ອາເມລິກາ ສືບຕໍ່ເພີ່ມຂຶ້ນອີກ 2,20 ລ້ານບາເຣວໃນອາທິດທີ 24/05/2019;
- ລາຄາຄຳ ເພີ່ມຂຶ້ນ 1,28% ຈາກ 1.281,57 ໂດລາ/ອອນ ເປັນ 1.298,00 ໂດລາ/ອອນ ເນື່ອງຈາກເງິນໂດລາມີຄວາມຜັນຜວນ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,13% ແລະ ອ່ອນຄ່າລົງ 0,68% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,50% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,84% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 20-24/05/2019 | | | ອາທິດນີ້ 27-31/05/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| <u>ອັດຕາທະຄານ[1]</u> | | | | | | | | | | | | |
| ໂດລາ | 8.717,90 | 8.747,58 | 8.734,79 | 8.731,74 | 8.760,32 | 8.745,89 | -0,16% | -0,15% | -0,13% | -1,49% | -1,51% | -1,50% |
| ບາດ | 274,81 | 276,60 | 275,77 | 276,17 | 278,26 | 277,66 | -0,49% | -0,60% | -0,68% | -3,61% | -3,88% | -3,84% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,30% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,44%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,06% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,35%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (24-30/05/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຂາຍເງິນໂດລາສຸດທິ 2,55 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 37,51 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 40,06 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 410,93 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 140,11 ລ້ານບາດ ແລະ ຂາຍເງິນບາດໄດ້ 551,04 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 5,34% ແລະ ເງິນບາດຫຼຸດລົງ 7,49%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມ ໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 1,83 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 40,10 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,45 ລ້ານໂດລາ ແລະ ເງິນບາດ ຈຳນວນ 29,38 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ມີການຂາຍເງິນສຸດທິຈຳນວນ 5,00 ລ້ານໂດລາ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 17-23/5/2019 | | ອາທິດນີ້ 24-30/5/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **49,27** | **123,12** | **37,51** | **140,11** | **-23,87%** | **13,80%** |
| - ທ/ຄທຸລະກິດລັດ | 22,94 | 29,40 | 17,17 | 75,64 | -25,15% | 157,28% |
| - ທ/ຄທຸລະກິດອື່ນໆ | 26,33 | 93,72 | 20,34 | 64,47 | -22,75% | -31,21% |
| **2. ການຂາຍເງິນຕາຕ່າງປະເທດ** | **32,68** | **623,98** | **40,06** | **551,04** | **22,58%** | **-11,69%** |
| - ທ/ຄທຸລະກິດລັດ | 12,11 | 366,48 | 9,75 | 278,12 | -19,49% | -24,11% |
| - ທ/ຄທຸລະກິດອື່ນໆ | 20,57 | 257,50 | 30,31 | 272,92 | 47,35% | 5,99% |
| **ຊື້-ຂາຍສຸດທິ ທທກ** | **16,59** | **-500,86** | **-2,55** | **-410,93** | **-115,37%** | **-17,96%** |
| - ຜິດດ່ຽງຊື້-ຂາຍ | 33,67% | -406,81% | -6,80% | -293,29% | -120,19% | -27,90% |
| **- ມູນຄ່າການຊື້-ຂາຍ** | **81,95** | **747,10** | **77,57** | **691,15** | **-5,34%** | **-7,49%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-9,56** | **0,00** | **-1,83** | **-40,10** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,56 | 0,00 | 1,83 | 40,10 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **3,07** | **26,93** | **1,45** | **29,38** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-5,00** | **0,00** | **-5,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 5,00 | 0,00 | 5,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 05/2019 ຄາດວ່າຈະຢູ່ໃນລະດັບ 2,67%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 49,27 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (24-30/05/2019) ກະແສເງິນໄຫຼອອກມີ ຈຳນວນ 149,32 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 117,82 ລ້ານໂດລາສະຫະລັດ, ຈ່າຍດອກເບ້ຍ ແລະ ເງິນປັນຜົນຈຳນວນ 25,50 ລ້ານໂດລາສະຫະລັດ). ສ່ວນກະແສເງິນໄຫຼເຂົ້າມີ ຈຳນວນ 100,27 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 86,43 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 578 ສະບັບທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 19 ສະບັບ, ລວມມູນຄ່າໂອນທັງໝົດ 336,33 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 31,87 ຕື້ກີບເທົ່າກັບ 8,66%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (24-30/05/2019) ມີທັງໝົດ 4.772 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ຫຼຸດລົງ ຈຳນວນ 380 ຕື້ກີບຈາກ 1.590,40 ຕື້ກີບ ມາເປັນ 1.210,11 ຕື້ກີບ ເທົ່າກັບ 23,91%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 207 ຄັ້ງ, ມູນຄ່າການໂອນເພີ່ມຂຶ້ນຈຳນວນ 58,26 ຕື້ກີບ ຈາກ 93,59 ຕື້ກີບ ມາເປັນ 35,33 ຕື້ກີບ ຫຼື ເທົ່າກັບ 62,25%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 815,76 ຈຸດ ເພີ່ມຂຶ້ນ ຈາກ 813,72 ຈຸດ ຫຼື ເທົ່າກັບ 0,25% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 823.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,68 ຕື້ກີບ ເພີ່ມຂຶ້ນ 420,54% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 71,82% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ BCEL, LAT ແລະ MHTL.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ (17-23/05/2019) | | | ອາທິດນີ້ (24-30/05/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະ ເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| BCEL | 68.800 | 404.195.000 | 5.950 | 262.100 | 1.574.600.000 | 6.200 | 280,96 | 289,56 | 4,20 |
| EDL-GEN | 70.200 | 274.251.000 | 3.950 | 473.000 | 1.864.685.000 | 3.940 | 573,79 | 579,92 | -0.25 |
| LWPC | - | - | 7.150 | - | - | 7.150 | - | - | - |
| PTL | - | - | 1.000 | - | - | 1.000 | - | - | - |
| SVN | - | - | 2.100 | 300 | 605.000 | 2.000 | - | - | -4,76 |
| PCD | - | - | 1.010 | - | - | 1.010 | - | - | - |
| LCC | - | - | 2.150 | 15.800 | 33.970.000 | 2.150 | - | - | - |
| MHTL | 10.300 | 30.315.000 | 2.990 | 72.300 | 215.522.000 | 3.000 | 601,94 | 610,94 | 0,33 |
| LAT | - | - | 750 | - | - | 800 | - | - | 6,67 |
| ທັງໝົດ | 149.300 | 708.761.000 | | 823.500 | 3.689.382.000 | | 451,57 | 420,54 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມວຽກພັດທະນາຈຸດສຸມໃຈກາງແຂວງໄຊສົມບູນ; ❷ກອງປະຊຸມທະວີພາຄີ ລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງມຽນມາ ຢູ່ປະເທດມຽນມາ ແລະ❸ກອງປະຊຸມສຳມະນາແລກປ່ຽນໃນ ຫົວຂໍ້ "ການສຶກສາທາງດ້ານການເງິນໃນອານະຄົດ" ຢູ່ປະເທດອາຟຣິກາໃຕ້.
- ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົກອ້ອມຈຳນວນໜຶ່ງເປັນຕົ້ນ: ❶ກອງປະຊຸມຄົ້ນຄວ້າຮ່າງດຳລັດວ່າດ້ວຍບໍລິສັດເຊົ່າສິນເຊື່ອ; ❷ກອງປະຊຸມປຶກສາຫາລືວຽກອອກແຈ້ງການການນຳໃຊ້ເອກະສານທີ່ບໍ່ແມ່ນໃບຕາດິນເປັນຫຼັກຊັບຄ້ຳປະກັນ; ❸ກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບການໂອນທຶນຈົດທະບຽນໃຫ້ແກ່ກຸ່ມທະນາຄານ ANZ ຈຳກັດ ສາຂາລາວ ແລະ ການປ່ຽນແປງຜູ້ຖືຮຸ້ນຂອງບໍລິສັດເຊົ່າສິນເຊື່ອ; ❹ກອງປະຊຸມທາບທາມຮ່າງກົດໝາຍວ່າດ້ວຍຫຼັກຊັບສະບັບປັບປຸງ; ❺ກອງປະຊຸມສຳມະນາໃນຫົວຂໍ້: "Data Governance Transformation"; ❻ຈັດຝຶກອົບຮົມວຽກງານຂ່າວ ແລະ ໂຄສົກລາຍການວິທະຍຸ ແລະ ❼ພິທີມອບ-ຮັບໜ້າທີ່ທ່ານຫົວໜ້າກົມກວດກາພາຍໃນລະຫວ່າງຜູ້ເກົ່າ ແລະ ຜູ້ໃໝ່. ພ້ອມກັນນັ້ນ, ທຫລ ຍັງໄດ້ຈັດງານວັນເດັກນ້ອຍສາກົນ ແລະ

ຂະບວນການປູກຕົ້ນໄມ້ແຫ່ງຊາດ (ວັນທີ 01 ມິຖຸນາ). ນອກນັ້ນ, ຊາວໜຸ່ມຮາກຖານ ທຫລ ໄດ້ຈັດສຳມະນາໃນຫົວຂໍ້: "ການເປີດເສລີການບໍລິການທາງການເງິນຂອງ ທຫລ ໃນຂອບອາຊຽນ".

- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ ສຳເລັດການອອກນິຕິກຳທີ່ສຳຄັນຈຳນວນ 3 ສະບັບຄື: ຂໍ້ຕົກລົງວ່າດ້ວຍການນຳທຶນເຂົ້າ-ອອກ ສປປ ລາວ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ, ຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປ ລາວ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂປຣແກຣມບັນຊີ ທຫລ; ❷ໄດ້ອອກໃບຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາ ຊົນ; ❸ລົງກວດກາທະນາຄານ ມາເລຍັນ ມະຫາຊົນ ສາຂາລາວ ປະຈຳປີ 2018 ຫາໄຕມາດ I/2019 ແລະ ❹ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກປະຈຳປີ 2018 ຈຳນວນ 4 ແຫ່ງ.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມສະພາແຫ່ງຊາດສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VIII; ❷ກອງປະຊຸມປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ປະເທດຟີລິບປິນ ແລະ ❸ກອງປະຊຸມສຳມະນາໃນຫົວຂໍ້: "Balancing Fintech Opportunities and Risks Implementing the Bali Fintech Agenda" ຢູ່ປະເທດໄທ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ມິຖຸນາ 2019; ❷ກອງປະຊຸມສ່ອງແສງສາຍພັກ-ສາຍລັດປະຈຳເດືອນ ພຶດສະພາ; ❸ກອງປະຊຸມປຶກສາຫາລືຄົ້ນຄວ້າສ້າງຍຸດທະສາດພັດທະນາໂຮງພິມທະນະບັດ ທຫລ; ❸ກອງປະຊຸມຄົ້ນຄວ້າປັບປຸງແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ; ❹ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ II ປະຈຳປີ 2019; ❺ກອງປະຊຸມຄຸ້ມຄອງບໍລິຫານຂອງທະນາຄານທຸລະກິດ, ການເປີດເຜີຍຂໍ້ມູນ ແລະ ການຫັກເງິນແຮ ❻ກອງປະຊຸມສຳມະນາລະຫວ່າງປະເທດກຸ່ມ CLMV ຢູ່ນະຄອນຫຼວງພະບາງ; ❼ກອງປະຊຸມສຳມະນາໃນຫົວຂໍ້: Global Banking Trends, Risk Governance and Internal Audit Transformation" ໃຫ້ທະນາຄານທຸລະກິດເປົ້າໝາຍ 20 ແຫ່ງ ແລະ ❽ກອງປະຊຸມຝຶກອົບຮົມໃນຫົວຂໍ້: "Payment System Governance and Oversight"
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກຄະນະຜູ້ອຳນວຍການ**ທະນາຄານການລົງທຶນ ແລະ ພັດທະນາຫວຽດນາມ BIDV.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ຫ້ອງການ

ພູມມະລີ ສີຣິພົນເດດ